# **ຕົວຢ່າງ,** ໜ້ານີ້ໃຊ້ສຳລັບອ້າງອີງເທົ່ານັ້ນ

EDD Employment Development Department
State of California

**ເບີໂທລະສັບພະແນກ EDD**:

| | |
|---|---|
| ພາສາອັງກິດ | 1-800-300-5616 |
| ພາສາສະເປນ | 1-800-326-8937 |
| ພາສາຈີນກວາງຕຸ້ງ | 1-800-547-3506 |
| ພາສາຈີນກາງ | 1-866-303-0706 |
| ພາສາຫວຽດ | 1-800-547-2058 |
| TTY (ບໍ່ມີສຽງ) | 1-800-815-9387 |

ເວັບໄຊອິນເຕີເນັດຂອງພະແນກ EDD: **www.edd.ca.gov**

________________________________
________________________________
________________________________

EMPLOYMENT DEVELOPMENT DEPARTMENT (EDD)

UI Center – Oakland #853
P.O. Box 12906
Oakland, CA 94604-2906

## ໜັງສືແຈ້ງການກ່ຽວກັບຄວາມຊ່ວຍເຫຼືອການຫວ່າງງານເນື່ອງຈາກໄພພິບັດຂອງລັດຖະບານກາງ

FEMA: ________

SSN: ________

ວັນທີສົ່ງຈົດໝາຍ: ________

ວັນທີການຮ້ອງຂໍເງິນຊ່ວຍເຫຼືອມີຜົນບັງໄຊ: ________

ຈຳນວນເງິນຊ່ວຍເຫຼືອສູງສຸດ: ________

ຈຳນວນເງິນຊ່ວຍເຫຼືອລາຍອາທິດ: ________

### ຈຳນວນລາຍໄດ້ທັງໝົດ/ຄ່າຈ້າງສຳລັບສິ້ນສຸດໄຕມາດຕາມປະຕິທິນ

| ໄຕມາດ/ປີ | | | | | ຊື່ນາຍຈ້າງ: |
|---|---|---|---|---|---|
| ຄ່າຈ້າງທັງໝົດ: | | | | | |

ຂໍ້ມູນສຳຄັນ: ພະແນກ EDD ໄດ້ຍື່ນການຮ້ອງຂໍເງິນຊ່ວຍເຫຼືອ DUA ຂອງທ່ານ. ຈະມີການຈ່າຍເງິນຊ່ວຍເຫຼືອ DUA ໃຫ້ກໍ່ຕໍ່ເມື່ອທ່ານມີຄຸນສົມບັດຕາມຂໍ້ກຳນົດທັງໝົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອເທົ່ານັ້ນ. ທ່ານມີເວລາ 21 ມື້ໃນການສົ່ງຫຼັກຖານທາງໄປສະນີໃຫ້ກັບພະແນກ EDD ວ່າທ່ານມີວຽກງານເຮັດ ຫຼື ທ່ານປະກອບອາຊີບອິດສະຫຼະກ່ອນເກີດໄພພິບັດ. ການບໍ່ສົ່ງຫຼັກຖານຈະສົ່ງຜົນກະທົບຕໍ່ການມີສິດໄດ້ຮັບເງິນຊ່ວຍເຫຼືອ DUA. (ຖ້ານີ້ແມ່ນໜັງສືແຈ້ງການສະບັບສະບັບແກ້ໄຂ ແລະຖ້າທ່ານໄດ້ສົ່ງຫຼັກຖານແລ້ວກ່ອນໜ້ານີ້ ທ່ານບໍ່ຈຳເປັນຕ້ອງສົ່ງໃຫ້ອີກ.)

ມີຂໍ້ມູນຕໍ່ໄປນີ້ໃນໜັງສືແຈ້ງການສະບັບນີ້:

*ຈຳນວນເງິນຊ່ວຍເຫຼືອສູງສຸດ:* ຈຳນວນເງິນທັງໝົດທີ່ທ່ານອາດຈະໄດ້ຮັບໃນການຮ້ອງຂໍເງິນຊ່ວຍເຫຼືອນີ້ ຖ້າທ່ານມີຄຸນສົມບັດຕາມຂໍ້ກຳນົດທັງໝົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອຂອງ DUA ລວມທັງທ່ານຍັງຫວ່າງງານຢູ່ເນື່ອງຈາກໄພພິບັດໂດຍກົງ. ຈຳນວນນີ້ໄດ້ຮັບການກຳນົດໂດຍກະຊວງແຮງງານສະຫະລັດ ອາເມລິກາ (U.S. Department of Labor).

*ຈຳນວນເງິນຊ່ວຍເຫຼືອລາຍອາທິດ:* ຈຳນວນເງິນສູງສຸດທີ່ທ່ານອາດຈະໄດ້ຮັບໃນແຕ່ລະອາທິດ ຖ້າທ່ານຢັ້ງຢືນສິດປະໂຫຍດ ແລະມີຄຸນສົມບັດຕາມຂໍ້ກຳນົດທັງໝົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອຂອງ DUA ທຸກອາທິດ. ຈຳນວນເງິນຊ່ວຍເຫຼືອລາຍອາທິດໃນການຮ້ອງຂໍເງິນຊ່ວຍເຫຼືອ DUA ທັງໝົດແມ່ນໄດ້ຮັບການກຳນົດໂດຍກະຊວງແຮງງານສະຫະລັດ ອາເມລິກາ. ພາຍໃຕ້ກົດໝາຍ ເງິນຈຳນວນນີ້ອາດຈະມີການປ່ຽນແປງຕາມຫຼັກຖານຄ່າຈ້າງ ຫຼື ລາຍໄດ້ທີ່ທ່ານສະໜອງໃຫ້.

*ລາຍໄດ້ທັງໝົດ/ຄ່າຈ້າງ:* ຈຳນວນລາຍໄດ້ທັງໝົດທີ່ນາຍຈ້າງໄດ້ລາຍງານໃນລະຫວ່າງໄຕມາດຕາມປະຕິທິນທີ່ລະບຸໄວ້. ລາຍໄດ້ຖືກນຳໃຊ້ເພື່ອຄິດໄລ່ຈຳນວນເງິນຊ່ວຍເຫຼືອສູງສຸດຂອງທ່ານ. ໜັງສືແຈ້ງການສະບັບນີ້ອາດຈະບໍ່ສະທ້ອນໃຫ້ເຫັນຄ່າຈ້າງສຳລັບໄຕມາດຕາມປະຕິທິນທີ່ລະບຸຂ້າງເທິງ. ຖ້າຄ່າຈ້າງຖືກເພີ່ມໃສ່ໃນການຮ້ອງຂໍເງິນຊ່ວຍເຫຼືອຂອງທ່ານ ທ່ານຈະໄດ້ຮັບໜັງສືແຈ້ງການສະບັບແກ້ໄຂທາງໄປສະນີ. (ຄ່າຈ້າງທີ່ໄດ້ຮັບ ຫຼື ທີ່ຈ່າຍໃຫ້ທ່ານໃນປີພາສີທີ່ຄົບປີຫຼ້າສຸດແມ່ນຖືກນຳໃຊ້ເພື່ອກຳນົດສິດໃນການຮ້ອງຂໍເງິນຊ່ວຍເຫຼືອຂອງທ່ານ. ຄ່າຈ້າງໝາຍເຖິງຄ່າຕອບແທນສຳລັບບໍລິການທີ່ໃຫ້ບໍລິການບຸກຄົນອື່ນ ຫຼື ລາຍໄດ້ສຸດທິຈາກບໍລິການທີ່ໃຫ້ບໍລິການໃນການປະກອບອາຊີບອິດສະຫຼະ ລວມທັງຄ່າຈ້າງແລະການຈ້າງງານຕົນເອງທີ່ບໍ່ໄດ້ຮັບການຄຸ້ມຄອງສຳລັບການຮ້ອງຂໍເງິນປະກັນການຫວ່າງງານປົກກະຕິ.)

*ຂໍ້ມູນເພີ່ມເຕີມ:*

- ທ່ານຕ້ອງຕິດຕໍ່ພະແນກ EDD ຖ້າຂໍ້ມູນໃນໜັງສືແຈ້ງການສະບັບນີ້ບໍ່ຖືກຕ້ອງຫຼືຂາດຫາຍໄປ.
- ເພື່ອທີ່ຈະໃຫ້ມີການພິຈາລະນາຈຳນວນເງິນຊ່ວຍເຫຼືອປະຈຳອາທິດທີ່ສູງກວ່າຈຳນວນທີ່ໄດ້ຮັບ ທ່ານຕ້ອງສົ່ງຫຼັກຖານລາຍໄດ້ໄປຫາທີ່ຢູ່ຂອງພະແນກ EDD ທີ່ລະບຸຂ້າງເທິງພາຍໃນວັນທີ ________. ຫຼັກຖານຄ່າຈ້າງ ຫຼື ລາຍໄດ້ຈາກການປະກອບອາຊີບອິດສະຫຼະລວມທັງຕົ້ນຂົ້ວເຊັກ (check stubs), ໃບຈ່າຍເງິນເດືອນ (payroll vouchers), ແບບຟອມ W-2, ແບບຟອມພາສີ ຫຼື ເອກະສານອື່ນໃດທີ່ສະແດງໃຫ້ເຫັນບ່ອນເຮັດວຽກຂອງທ່ານ ແລະຈຳນວນເງິນທີ່ທ່ານໄດ້ຮັບ ຫຼື ລາຍໄດ້ສຸດທິຂອງທ່ານຈາກການຈ້າງງານຕົນເອງ. ລະບຸໝາຍເລກປະກັນສັງຄົມ, ຊື່ແລະທີ່ຢູ່ຂອງທ່ານໃນເອກະສານໃດໆທີ່ຂຽນເປັນລາຍລັກອັກສອນທີ່ທ່ານສະໜອງໃຫ້ພະແນກ EDD ເພື່ອເຮັດໃຫ້ແນ່ໃຈວ່າຂໍ້ມູນຈະໄດ້ຮັບການດຳເນີນການໃນທັນທີ.
- ທ່ານຕ້ອງສືບຕໍ່ຢັ້ງຢືນສຳລັບອາທິດໃດໆທີ່ທ່ານຕ້ອງການທີ່ຈະໄດ້ຮັບເງິນຊ່ວຍເຫຼືອ DUA (ຕາບໃດທີ່ທ່ານຍັງຫວ່າງງານຢູ່ເນື່ອງຈາກໄພພິບັດ) ໃນຂະນະທີ່ຍັງລໍຖ້າການພິຈາລະນາເອກະສານລາຍໄດ້ໃດໆທີ່ທ່ານສະໜອງໃຫ້ພະແນກ EDD.

**ໜັງສືແຈ້ງການກ່ຽວກັບການຮັກສາຄວາມລັບ**: ໜັງສືແຈ້ງການສະບັບນີ້ສຳລັບການໃຊ້ງານຂອງບຸກຄົນທີ່ກຳນົດພຽງຜູ້ດຽວເທົ່ານັ້ນ. ໜັງສືແຈ້ງການສະບັບນີ້ມີຂໍ້ມູນທີ່ເປັນຄວາມລັບ ຫຼື ຂໍ້ມູນລະອຽດອ່ອນ. ພາຍໃຕ້ປະມວນກົດໝາຍອາຍາ 502 ແລະ ປະມວນກົດໝາຍແພ່ງ 1798.53 (Under Penal Code 502 and Civil Code 1798.53) ການກວດເບິ່ງ, ການນຳໃຊ້, ການເປີດເຜີຍ ຫຼື ການແຈກຢາຍເນື້ອຫາຂອງເອກະສານສະບັບນີ້ໂດຍບໍ່ໄດ້ຮັບອະນຸຍາດແມ່ນເປັນສິ່ງຕ້ອງຫ້າມ ແລະມີໂທດທາງອາຍາ/ຄ່າປັບໄໝ. ຖ້າທ່ານບໍ່ແມ່ນບຸກຄົນທີ່ກຳນົດ ກະລຸນາຕິດຕໍ່ພະແນກ EDD.